ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 3300/ກປ.

ນະຄອນຫລວງວຽງຈັນ, ວັນທີ 30 OCT 2014

**ຄຳສັ່ງ**
**ຂອງລັດຖະມົນຕີ ກ່ຽວກັບ**
**ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາຢັ້ງຢືນສຸຂານາໄມພືດ**
**ສຳລັບ ພືດ ແລະ ຜະລິດຕະພັນພືດ ສົ່ງອອກ ໄປຍັງ ສສ ຫວຽດນາມ**

ເຖິງ: - ທ່ານ ຫົວໜ້າຫ້ອງການ, ກົມ, ສະຖາບັນ ແລະ ໂຄງການຕ່າງໆອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້.
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09/12/2008.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມບົດບັນທຶກການຮ່ວມມື ລະຫວ່າງກົມປູກຝັງ (ສປປ ລາວ) ແລະ ກົມປ້ອງກັນພືດ (ສສ ຫວຽດນາມ) ກ່ຽວກັບ ການກັກກັນພືດ ແລະ ການກວດກາປະຕູດຽວ ຄັ້ງດຽວ ຄັ້ງວັນທີ 3/10/2014 ທີ່ ແຂວງກວາງຈິ, ສສ ຫວຽດນາມ.
- ອີງຕາມແຈ້ງການ ຂອງກົມປ້ອງກັນພືດ, ສສ ຫວຽດນາມ ກ່ຽວກັບ ການຢັ້ງຢືນສຸຂານາໄມພືດ ສຳລັບ ພືດ ແລະ ຜະລິດຕະພັນພືດ ສົ່ງອອກ ໄປຍັງ ສສ ຫວຽດນາມ, ລົງວັນທີ 14 /10/2014.

ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ສົ່ງອອກ ແລະ ຜູ້ດຳເນີນທຸລະກິດສຸຂານາໄມພືດ ຫຼີກເວັ້ນຜົນກະທົບ ຕໍ່ຜະລິດຕະພັນກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ໄປຍັງ ສສ ຫວຽດນາມ ພ້ອມທັງຮັບປະກັນການປະຕິບັດຕາມມາດຕະຖານສາກົນ ດ້ານມາດຕະການສຸຂານາໄມພືດຂອງສົນທິສັນຍາປ້ອງກັນພືດສາກົນ (ISPMs, IPPC) ແລະ ລະບຽບການນຳເຂົ້າດ້ານສຸຂານາໄມພືດ ຂອງ ສສ ຫວຽດນາມ.

**ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:**

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ ທີ່ມີ ດ່ານປ້ອງກັນພືດ ຊີ້ນຳຂະແໜງປູກຝັງ, ດ່ານປ້ອງກັນພືດໃນການຄຸ້ມຄອງ, ການກວດກາ ແລະ ການອອກໃບຢັ້ງຢືນສຸຂານາໄມພືດ (Phytosanitary certificate-PC) ສຳລັບ ພືດ ແລະ ຜະລິດຕະພັນພືດທີ່ສົ່ງອອກ ໄປຍັງ ສສ ຫວຽດນາມ ໂດຍປະຕິບັດຕາມມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດຂອງສົນທິສັນຍາປ້ອງກັນພືດສາກົນ (ISPMs-IPPC); ເຊິ່ງ ສສ ຫວຽດນາມ ຈະເລີ່ມບັງຄັບໃຊ້ມາດຕະການດັ່ງກ່າວ ນັບແຕ່ **ວັນທີ 1 ພຶດສະພາ 2015** ເປັນຕົ້ນໄປ;

2. ບັນດາພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ທີ່ມີ ດ່ານປ້ອງກັນພືດສາກົນ ຊຶ່ງມີຊາຍແດນຕິດຈອດກັບ ສສ ຫວຽດນາມ (ດ່ານປາງຫົກ ແຂວງຜົ້ງສາລີ, ດ່ານນ້ຳໂສຍ ແຂວງຫົວພັນ, ດ່ານນ້ຳກັ່ນ ແຂວງຊຽງຂວາງ, ດ່ານນ້ຳພາວ ແຂວງບໍລິຄຳໄຊ, ດ່ານນາເພົ້າ ແຂວງຄຳມ່ວນ, ດ່ານແດນສະຫວັນ ແຂວງສະຫວັນນະເຂດ, ດ່ານລະໄລ ແຂວງສາລະວັນ ແລະ ດ່ານພູເກືອ ແຂວງອັດຕະປື) ມີຄວາມຮັບຜິດຊອບໃນການຂຶ້ນແຜນງົບປະມານ ເພື່ອປັບປຸງພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກ ປະຈຳດ່ານປ້ອງກັນພືດ, ສ້າງແຜນ ກໍ່ສ້າງ ແລະ ພັດທະນາວິຊາການສະເພາະດ້ານປ້ອງກັນພືດ ເພື່ອກຽມຄວາມພ້ອມໃນການອອກໃບຢັ້ງຢືນສຸຂານາໄມພືດ ປະຈຳດ່ານປ້ອງກັນພືດສາກົນໃນແຂວງຂອງຕົນ;
3. ໃຫ້ກົມປູກຝັງ ແຈ້ງໃຫ້ ອົງການປ້ອງກັນພືດແຫ່ງຊາດ (ກົມປ້ອງກັນພືດ) ຂອງ ສສ ຫວຽດນາມ ແລະ ຄະນະເລຂາທິການສົນທິສັນຍາປ້ອງກັນພືດສາກົນ ເພື່ອແຈ້ງຕໍ່ ໄປຍັງ ບັນດາປະເທດທີ່ເປັນພາຄີ ຂອງ ສົນທິສັນຍາປ້ອງກັນພືດສາກົນ ຮັບຊາບ ເຖິງ ການປັບປຸງລະບົບການອອກໃບຢັ້ງຢືນສຸຂານາໄມພືດ ຢູ່ດ່ານປ້ອງກັນພືດຂອງ ສປປ ລາວ;
4. ມອບໃຫ້ກົມປູກຝັງ ອອກແຈ້ງການ, ບົດແນະນຳເຕັກນິກ, ແຜນຝຶກອົບຮົມດ້ານເຕັກນິກວິຊາການ, ພ້ອມທັງຕິດຕັ້ງໂປແກຣມການອອກໃບຢັ້ງຢືນສຸຂານາໄມພືດ (National Phytosanitary Database) ຕາມມາດຕະຖານສາກົນ ດ້ານມາດຕະການສຸຂານາໄມພືດ (ISPMs-IPPC), ແນະນຳການປະຕິບັດສັນຍາວ່າດ້ວຍ ສຸຂານາໄມ ແລະ ສຸຂານາໄມພືດ ຂອງອົງການ ການຄ້າໂລກ (SPS-WTO Agreement) ແລະແນະນຳວິທີການຈັດຕັ້ງປະຕິບັດລະບຽບການນຳເຂົ້າດ້ານສຸຂານາໄມພືດ ຂອງ ສສ ຫວຽດນາມ;
5. ມອບໃຫ້ກົມປູກຝັງ, ຂະແໜງປູກຝັງແຂວງ, ນະຄອນຫຼວງ ແລະ ດ່ານປ້ອງກັນພືດ ຮັບຜິດຊອບ ໃນການກວດກາພືດ, ການອອກໃບຢັ້ງຢືນສຸຂານາໄມພືດ ແລະ ລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ ໂດຍປະຕິບັດຕາມຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍ ການແຕ່ງຕັ້ງພະນັກງານຜູ້ມີສິດລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ ຕາມທີ່ໄດ້ລະບຸໄວ້ໃນແຕ່ລະໄລຍະ ຢ່າງເຂັ້ມງວດ;
6. ກົມປູກຝັງ ມີບົດບາດ ໜ້າທີ່ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29, 30 ຂອງ ດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ;
7. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຈ/ນ, ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ — ລັດຖະມົນຕີ

ດຣ. ຕື ພົມມະສັກ

ບ່ອນນຳສົ່ງ:

- ຫ້ອງວ່າການສູນກາງພັກ 01 ສະບັບ (ເພື່ອລາຍງານ)
- ຫ້ອງວ່າການລັດຖະບານ 01 ສະບັບ (ເພື່ອລາຍງານ)
- ກະຊວງ ອຸດສາຫະກຳແລະການຄ້າ 01 ສະບັບ (ເພື່ອລາຍງານ)
- ກະຊວງ ການເງິນ 01 ສະບັບ (ເພື່ອລາຍງານ)
- ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ (ເພື່ອລາຍງານ)
- ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ ບ່ອນລະ 01 ສະບັບ
- ຫ້ອງການກະຊວງ ກປ 01 ສະບັບ
- ດ່ານສາກົນ ບ່ອນລະ 01 ສະບັບ
- ເກັບມ້ຽນ 01 ສະບັບ